ໂຄງການເງິນລ້ຽງລູກ
ຂອງຣັດວໍຊິງຕັນ



# ການບັນຣະຍາຍ
# ໂດຍສະລູບ

Washington State
Department of Social & Health Services
Transforming lives





## ເງິນລ້ຽງລູກແມ່ນສຳຄັນ

ລູກຕ້ອງການການອູ້ມຊູຈາກພໍ່ແມ່ທັງສອງຄົນ. ເມື່ອເວລາພໍ່ແມ່ຄົນນຶ່ງບໍ່ອາໄສຢູ່ນຳລູກແລ້ວ, ເງິນລ້ຽງລູກແມ່ນເງິນທີ່ຖືກຈ່າຍໃຫ້ເພື່ອຈະເອົາໃຫ້ສຳລັບຄວາມຕ້ອງການຈຳເປັນຂອງລູກ.

- ຄວາມຕ້ອງການຈຳເປັນຂອງລູກລວມເອົາອາຫານ, ບ່ອນຢູ່ອາໄສ ແລະ ເຄື່ອງນຸ່ງ
- ຍັງສາມາດລວມເອົາຄ່າເບິ່ງແຍງດູແລລູກ ແລະ ການຄຸ້ມກັນພະຍາບານໄດ້ອີກດ້ວຍ
- ເງິນລ້ຽງລູກແມ່ນຫລາຍເກີນກວ່າຂອງຂວັນສຳລັບເວລາຂອງພໍ່ແມ່, ຄວາມຮັກ ແລະ ການອູ້ມຊູທາງດ້ານຈິດໃຈ
- ການເບິ່ງແຍງຕອບສະນອງຄວາມຕ້ອງການຂອງລູກຈະເອົາໃຫ້ເຂົາເຈົ້າຊີວິດທີ່ອຸດົມສົມບູນ, ປອດພັຍຂຶ້ນອີກ
- ພວກເຮົາບໍ່ຮັບປະກັນການເກັບເອົາເງິນລ້ຽງລູກ ຫລື ການຈ່າຍເງິນ

## ພະແນກ **Division of Child Support**

ກົມ Department of Social and Health Services, (ກົມສັງຄົມສົງເຄາະ ແລະ ສາທາຣະນະສຸກ), Division of Child Support (DCS) (ພະແນກເກັບເງິນລ້ຽງລູກ) ເກັບເອົາເງິນລ້ຽງລູກສຳລັບເດັກນ້ອຍຜູ້ທີ່ມີພໍ່ແມ່ຄົນນຶ່ງ ຫລື ທັງສອງຄົນຢູ່ນອກເຮືອນ ລວມທັງຜູ້ທີ່ກຳລັງຮັບເອົາເງິນຊ່ວຍເຫລືອສາທາຣະນະຢູ່.

ພໍ່ແມ່ ແລະ ຜູ້ເບິ່ງແຍງດູແລສາມາດຮ້ອງຂໍນຳ DCS ເພື່ອຄວາມຊ່ວຍເຫລືອນຳການເກັບເອົາເງິນລ້ຽງລູກ ແລະ ການບັງຄັບໃຫ້ມີການຄຸ້ມກັນພະຍາບານ.

ຖ້າຫາກວ່າທ່ານບໍ່ທັນມີຄຳສັ່ງຈ່າຍເງິນລ້ຽງລູກເທື່ອ, DCS ສາມາດກໍ່ຕັ້ງຄຳສັ່ງຈ່າຍເງິນລ້ຽງລູກຈາກອຳນາດການປົກຄອງ. DCS ຍັງສາມາດສົ່ງສຳນວນເອກສານຕໍ່ໄປອີກສຳລັບການກໍ່ຕັ້ງສາຍເລືອດພໍ່ລູກ.

ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບ DCS:

- ໂທຫາພວກເຮົາໄດ້ທີ່ເລກ 800-457-6202
- ຫລື ໄປຫາແວບໄຊທ໌ຂອງພວກເຮົາໄດ້ທີ່ www.childsupportonline.wa.gov

## DCS ສາມາດຊ່ວຍເຫລືອທ່ານ...

- ເອົາຄຳສັ່ງຈ່າຍເງິນລ້ຽງລູກສຳລັບລູກຂອງທ່ານ
- ກໍ່ຕັ້ງສາຍເລືອດພໍ່ລູກ
- ເກັບເອົາເງິນລ້ຽງລູກປັດຈຸບັນ ແລະ ຜ່ານມາ
- ບັງຄັບໃຫ້ມີການອູ້ມຊູດ້ານການພະຍາບານ
- ດັດແປງໃຫມ່ຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານ
- ເຮັດວຽກນຳຣັດອື່ນເພື່ອຈະເກັບເອົາເງິນລ້ຽງລູກຢູ່ໃນນາມຂອງທ່ານ

## DCS ບໍ່ສາມາດ_ຊ່ວຍເຫລືອທ່ານນຳ...

- ຄວາມຄຸ້ມຄອງເດັກນ້ອຍ ຫລື ຄວາມຂັດແຍ້ງເຣື່ອງການຢ້ຽມຢາມ
- ການບັງຄັບໃຊ້ໃນການຕົກລົງກ່ຽວກັບຊັບສິນລວມນຳກັນ
- ການເກັບເອົາຄ່າທຳນຽມຂອງທະນາຍຄວາມ
- ຫນີ້ທີ່ກ່ຽວພັນນຳສິ່ງທີ່ບໍ່ແມ່ນເງິນລ້ຽງລູກອື່ນໆ

## ການຮ້ອງຂໍເອົາການບໍຣິການຂອງ DCS

ພໍ່ແມ່ ຫລື ຜູ້ເບິ່ງແຍງດູແລສາມາດດາວໂຫລດໃບຟອມໄດ້ທີ່:

www.childsupportonline.wa.gov

*(ບີບໃສ່* Division of Child Support Forms*)*

- ຫລື ໂທຫາ -

800-442-KIDS (800-442-5437)

ເພື່ອຈະຂໍເອົາໃບຄຳຮ້ອງ.

ສົ່ງທາງໄປສະນີໃບຄຳຮ້ອງທີ່ຖືກຂຽນປະກອບແລ້ວໄປທີ່:

DCS
PO Box 11520
Tacoma, WA 98411

ພໍ່ແມ່ ຫລື ຜູ້ເບິ່ງແຍງດູແລຜູ້ທີ່ກຳລັງໄດ້ຮັບເງິນຊ່ວຍເຫລືອສາທາຣະນະຢູ່ບໍ່ຕ້ອງການໃບຄຳຮ້ອງຍ້ອນວ່າພະແນກ Community Services Division ເອົາຣາຍຣະອຽດທີ່ຈຳເປັນໃຫ້ DCS.

## ການຊ່ວຍເຫລືອສາທາຣະນະ

ມັນຍາກສຳລັບພໍ່ແມ່ ຫລື ຜູ້ເບິ່ງແຍງດູແລທີ່ຈະປະຕິບັດຫນ້າທີ່ຄວາມຮັບຜິດຊອບເຕັມທີ່ສຳລັບຄວາມຕ້ອງການຂອງເດັກນ້ອຍທຸກໆຢ່າງ.ບາງເທື່ອພໍ່ແມ່ ແລະ ຜູ້ເບິ່ງແຍງດູແລຕ້ອງໄດ້ຮັບຄວາມຊ່ວຍເຫລືອຈາກຜູ້ເສັຽເງິນພາສີໂດຍຜ່ານເງິນສິດຊ່ວຍເຫລືອສາທາຣະນະເພື່ອຈະຈ່າຍສຳລັບບ່ອນຢູ່ອາສັຍຂອງເດັກນ້ອຍ, ອາຫານ ແລະ ຄວາມຕ້ອງການດ້ານການພະຍາບານ. ການຊ່ວຍເຫລືອອັນນີ້ໄດ້ຖືກເປັນທີ່ຮູ້ຈັກກັນວ່າແມ່ນເງິນຊ່ວຍເຫລືອຊົ່ວຄາວສຳລັບຄອບຄົວຂັດສົນ (TANF).

- ໃນຂະນະທີ່ພໍ່ແມ່ ຫລື ຜູ້ເບິ່ງແຍງດູແລໄດ້ຮັບເງິນຊ່ວຍເຫລືອສາທາຣະນະສຳລັບເດັກນ້ອຍຢູ່ໃນເຮືອນຂອງເຂົາເຈົ້າ ຫລື ຢູ່ໃນການເບິ່ງແຍງດູແລລູກລ້ຽງ, ຣັດເກັບເອົາໄວ້ເງິນລ້ຽງລູກທີ່ຖືກເກັບເອົາມາ.
- ເມື່ອເວລາຄອບຄົວບໍ່ຕ້ອງການເງິນຊ່ວຍເຫລືອສາທາຣະນະຕໍ່ໄປອີກແລ້ວ, DCS ເກັບເອົາເງິນລ້ຽງລູກ ແລະ ສົ່ງໄປໃຫ້ພໍ່ແມ່ ຫລື ຜູ້ເບິ່ງແຍງດູແລ.

- ຮັດອາດຈະເກັບເອົາເງິນຈ່າຍຄ່າລ້ຽງລູກບາງສ່ວນໄວ້ເມື່ອເວລາຄອບຄົວບໍ່ໄດ້ຮັບການຊ່ວຍເຫລືອສາທາລະນະຕໍ່ໄປອີກແລ້ວ.

ເພື່ອຮາຍລະອຽດເພີ້ມເຕີມກ່ຽວກັບການຊ່ວຍເຫລືອສາທາລະນະ, ໂທຫາພະແນກ Community Services Division ໄດ້ທີ່ເລີ້ທີ່ 800-865-7801.

ຫລື ໄປຫາແວບໄຊທ໌ໄດ້ທ www.washingtonconnection.org ເພື່ອຈະຮ້ອງຂໍເອົາ, ຕໍ່ໃຫມ່, ຫລື ລາຍງານການປ່ຽນແປງ.

## ສາຍເລືອດພໍ່ລູກ

ພໍ່ແມ່ຜູ້ທີ່ບໍ່ໄດ້ແຕ່ງງານກັນຈະກໍ່ຕັ້ງສາຍເລືອດພໍ່ລູກ (ການເປັນພໍ່ລູກກັນ) ເມື່ອເວລາແມ່ ແລະ ພໍ່ຕົກລົງເຫັນພ້ອມໂດຍສະມັກໃຈວ່າເຂົາເປັນພໍ່ ແລະ ພວກເຂົາເຈົ້າໄດ້ເຊັນຊື່ໃສ່ໃບຮັບຮູ້ສາຍເລືອດພໍ່ລູກ. DCS ຍັງສະເນີໃຫ້ມີການກວດເບິ່ງເຊື້ອສັມພັນອີກດືກັນເພື່ອຈະພິຈາຣະນາເບິ່ງການເປັນພໍ່ລູກຢູ່ໃນບາງກໍຣະນີ. ກໍຣະນີອື່ນໆໄດ້ຖືກສົ່ງຕໍ່ໄປເອົາການດຳເນີນການຈາກສານສູງສຸດ. ການກໍ່ຕັ້ງສາຍເລືອດພໍ່ລູກອາດຈະເປັນພື້ນເຖິງໃບຄຳສັ່ງກໍ່ຕັ້ງຄວາມຮັບຜິດຊອບໃນເງິນລ້ຽງລູກ. ມັນຍັງອາດຈະຊ່ວຍເຫລືອເດັກນ້ອຍໄດ້ອີກດືກັນທີ່ຈະໄດ້ປະກັນພັຍສຸຂະພາບ, ເງິນບັນນາກິນເກົ່າ, ຫລື ເງິນຄວາມປອດພັຍຂອງສັງຄົມ.



**ມັນມີຢູ່ສາມທີນທາງເພື່ອຈະກໍ່ຕັ້ງສາຍເລືອດພໍ່ລູກໃຫ້ຖືກຕ້ອງຕາມກົດຫມາຍ:**

- ການແຕ່ງງານກ່ອນການເກີດຂອງລູກ.
- ເຊັນຊື່ໃສ່ໃບຟອມກົດຫມາຍຊຶ່ງຖືກເອີ້ນວ່າການຮັບຮູ້ສາຍເລືອດພໍ່ລູກແລະ ຍື່ນນຳກົມ Department of Health. ໃບລາຍເກີດຈະບໍ່ງຊື່ພໍ່ຖ້າຫາກວ່າພໍ່ແມ່ທັງສອງຄົນຕົກລົງເຫັນພ້ອມນຳທີ່ຈະເຊັນຊື່ໃສ່ໃບຟອມ.
- ເອົາຄຳສັ່ງຈາກສານ.

**ເພື່ອຮາຍລະອຽດເພີ້ມເຕີມ:**

- ໂທຫາເລກ 1-800-442-5437
- ຫລື ໄປທີ່ແວບໄຊທ໌ການກໍ່ຕັ້ງສາຍເລືອດພໍ່ລູກຂອງພວກເຮົາໄດ້ທີ່ www.childsupportonline.wa.gov *(ບີບໃສ່* Paternity Establishment*)*

## ຄຳສັ່ງຈາກສານ

ຢູ່ໃນຣັດວໍຊິງຕັນ, ສານສູງສຸດ ຫລື ສານຊົນເຜົ່າກໍ່ຕັ້ງຄຳສັ່ງ ແລະ ຕັດສິນວ່າແມ່ນໃຜຄວນຈະຈ່າຍເງິນລ້ຽງລູກ.ຄຳສັ່ງສານສາມາດເປັນສຳລັບການຢ່າຮ້າງ, ຄວາມຄຸ້ມຄອງ, ສາຍເລືອດພໍ່ລູກ ແລະ/ຫລື ເຣື່ອງຕ່າງໆທີ່ພົວພັນນຳເງິນລ້ຽງລູກ. ມີແຕ່ສານເທົ່ານັ້ນສາມາດທຳການປ່ຽນແປງໃສ່ຄຳສັ່ງຈາກສານໄດ້.

DCS ບໍ່ສາມາດປ່ຽນແປງຄຳເວົ້າຢູ່ໃນຄຳສັ່ງຈາກສານ. ກົດໝາຍຂອງຣັດບົ່ງໃຫ້ DCS ທີ່ຈະປະຕິບັດຕາມຄຳສັ່ງຈາກສານຢ່າງຖືກຕ້ອງແນ່ນອນຕາມທີ່ຖືກຂຽນໄວ້. ເມື່ອເວລາ DCS ກໍ່ຕັ້ງຄຳສັ່ງຈ່າຍເງິນລ້ຽງລູກ, ພວກເຮົາລວມເອົາເງື່ອນໄຂຂອງການອູ້ມຊູດ້ານການພະຍາບານທີ່ບົ່ງໃຫ້ພໍ່ແມ່ທັງສອງຄົນໃຫ້ເອົາປະກັນພັຍສຸຂະພາບໃຫ້, ເມື່ອເວລາມັນມີໄວ້ໃຫ້ໂດຍຜ່ານນາຍຈ້າງ ຫລື ຢູນຽນ.

## ໜີ້ໃນຜ່ານມາ

- DCS ແລະ ສານກໍ່ຕັ້ງເງິນຈ່າຍຄ່າລ້ຽງລູກປະຈຳເດືອນໂດຍການໃຊ້ຕາຕະລາງເງິນລ້ຽງລູກຂອງຣັດວໍຊິງຕັນ ແລະ ໂດຍອີງຕາມຄວາມສາມາດຂອງພໍ່ແມ່ທີ່ຈະຈ່າຍ.
- ການຈ່າຍເງິນລ້ຽງລູກທີ່ບໍ່ທັນໄດ້ຈ່າຍກາຍເປັນໜີ້ທີ່ຖືກເອີ້ນວ່າໜີ້ໃນຜ່ານມາ.
- ເງິນທີ່ຍັງຕິດພໍ່ແມ່ຜູ້ມີຄວາມຄຸ້ມຄອງສຳລັບເງິນລ້ຽງລູກຜ່ານມາ ຫລືຍັງຕິດ DSHS ຢູ່ສຳລັບເງິນຊ່ວຍເຫລືອ TANF ທີ່ຖືກເອົາໃຫ້ເດັກນ້ອຍແມ່ນໜີ້ໃນຜ່ານມາ.

## ການປ່ຽນແປງຄຳສັ່ງຈ່າຍເງິນລ້ຽງລູກ (ການດັດແປງໃໝ່)

ຖ້າຫາກວ່າທ່ານຢາກໃຫ້ DCS ທີ່ຈະກວດເບິ່ງຄືນຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານ, ໂທຫາ DCS ແລະ ຂໍເອົາການກວດເບິ່ງຄືນເອົາການດັດແປງໃໝ່. ພໍ່ແມ່ຍັງສາມາດດັດແປງຄຳສັ່ງຈ່າຍເງິນລ້ຽງລູກໃໝ່ໂດຍຕົນເອງ, ຫລື ດ້ວຍຄວາມຊ່ວຍເຫລືອຈາກຜູ້ປະສານງານກົດໝາຍຄອບຄົວ ຫລື ທະນາຍຄວາມສ່ວນຕົວ. ຜູ້ປະສານງານອາດຈະສາມາດທີ່ຈະຊ່ວຍເຫລືອນຳການດຳເນີນການດັດແປງໃໝ່ prose (ສຳລັບຕົວທ່ານເອງ). ອັນນີ້ໝາຍຄວາມວ່າການໄປຂື້ນສານໂດຍຕົວທ່ານເອງໂດຍປາສຈາກຄວາມຊ່ວຍເຫລືອຂອງທະນາຍຄວາມ.ບາງເທື່ອການດຳເນີນການ pro se ຈະເປັນຫົນທາງທີ່ໄວກວ່າເພື່ອຈະປ່ຽນແປງຄຳສັ່ງຈ່າຍເງິນລ້ຽງລູກ.

ເພື່ອຈະຊອກຫາຜູ້ປະສານງານຢູ່ໃນຫ້ອງການສະມຽນຂອງຄາວຕີຂອງທ່ານຈົ່ງໂທຫາເລກ 800-933-6772.

- ຫລື ໄປ້ທີ່ www.courts.wa.gov ຫລ www.mrsc.org.

## ການຈ່າຍເງິນໃຫ້ DCS

ຄຳສັ່ງບາງອັນອະນຸຍາດໃຫ້ຜູ້ຈ່າຍເງິນທີ່ຈະສົ່ງການຈ່າຍເງິນໄປຫາພໍ່ແມ່ຜູ້ມີຄວາມຄຸ້ມຄອງໂດຍກົງໂລດ. ຄຳສັ່ງໃບອື່ນອະນຸຍາດໃຫ້ຜູ້ຈ່າຍທີ່ຈະສົ່ງການຈ່າຍເງິນໄປຫາ DCS ໂດຍທາງເຊັກເງິນສ່ວນຕົວ, ທາງ Web ຫລື ການໂອນເງິນທາງເອເລກໂຕຣນິກ Electronic Funds Transfer (EFT). ເພື່ອຣາຍຣະອຽດກ່ຽວກັບ EFT ແລະ ການຈ່າຍເງິນທາງ Web ໂທຫາເລກ 800-468-7422 ຫລື ເບິ່ງແວບໄຊທ໌ຂອງ DCS ໄດ້ທ www.childsupportonline.wa.gov.

ຄຳສັ່ງຈ່າຍເງິນລ້ຽງລູກສ່ວນຫລາຍຈະມີການກັກເອົາເງິນຣາຍໄດ້ໄວ້, ຊຶ່ງໝາຍຄວາມວ່ານາຍຈ້າງໄດ້ຖືກບົ່ງໃຫ້ກັກເອົາເງິນລ້ຽງລູກໄວ້ຈາກຍອດຣາຍໄດ້ທີ່ເຮັດວຽກເອົາຂອງພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງຊຶ່ງເປັນຈຳນວນເງິນທີ່ຍັງເຫລືອຫລັງຈາກການຫັກເອົາເງິນທີ່ຖືກບົ່ງຢ່າງຖືກຕ້ອງຕາມກົດໝາຍໄດ້ຖືກເຮັດແລ້ວ ແລະ ສົ່ງເງິນໄປຫາ Washington State Support Registry (WSSR). ຢູ່ໃນກໍຣະນີສ່ວນຫລາຍແລ້ວ, DCS ຈະທຳການກັກເອົາເງິນໄວ້ເຖິງແມ່ນວ່າພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງບໍ່ໄດ້ຊ້າໃນການຈ່າຍເງິນກໍຕາມ.

ສົ່ງທາງໄປສະນີເຊັກເງິນ ຫລື ມັນນີອໍເດີໄປທີ່:

**WSSR**
**PO Box 45868**
**Olympia, WA 98504-5868**

*ເພື່ອຈະຮັບປະກັນການດຳເນີນການທີ່ຖືກຕ້ອງແນ່ນອນ, ກະຣຸນາໃຫ້ແນ່ໃຈວ່າຊື່ ແລະ ເລກຄວາມປອດພັຍຂອງສັງຄົມຂອງທ່ານໄດ້ຖືກຂຽນໃສ່ຢ່າງຈະແຈ້ງໃສ່ໃນໃບຈ່າຍເງິນຂອງທ່ານ*

## ການຈ່າຍເງິນໄປຫາພໍ່ແມ່ ແລະ ຜູ້ເບິ່ງແຍງດູແລ

ພໍ່ແມ່ຜູ້ທີ່ມີຄວາມຄຸ້ມຄອງສາມາດໄດ້ຮັບການຈ່າຍເງິນລ້ຽງລູກໂດຍທາງການຝາກໂອນເຂົ້າໂດຍກົງ ຫລື ບັດເດບິດຈ່າຍກ່ອນຊຶ່ງຖືກເອີ້ນວ່າບັດ DCS Card. ແບບວິທີເຫລົ່ານີ້ອະນຸຍາດໃຫ້ DCS ທີ່ຈະຝາກໂອນເຂົ້າໃສ່ການຈ່າຍເງິນທາງເອເລກໂຕຣນິກ. ບັດ DCS Card ມີກາເຄື່ອງໝາຍ VISA logo ແລະ ອະນຸຍາດໃຫ້ DCS ທີ່ຈະຝາກໂອນການຈ່າຍເງິນເຂົ້າໃສ່ເພື່ອວ່າເຄື່ອງຈັກ ATM ຫລື ສະຖານທີ່ຈຸດຂາຍເຄື່ອງ (ທີ່ຮັບເອົາບັດ VISA)ສາມາດຈ່າຍເງິນລ້ຽງລູກອອກມາໄດ້.

ການຝາກໂອນເຂົ້າໂດຍກົງ ແລະ ໃບຟອມອະນຸຍາດ DCS Card ຈະມີໄວ້ໃຫ້ທາງແວບໄຊທ໌ຂອງ DCS ຢູ່ທີ່ www.childsupportonline.wa.gov (*ບົບໃສ່* Divison of Child Support Forms). ເພື່ອຣາຍຣະອຽດເພີ້ມເຕີມໂທຫາເລກ 1-800-468-7422.

## ເຫດຜົນທີ່ສາມາດຖ່ວງດຶງກິຈກັມໃນສຳນວນເອກສານຂອງທ່ານ

- ມັນຈະໃຊ້ເວລາສຳລັບ DCS ທີ່ຈະໄດ້ຮັບຄຳສັ່ງຈ່າຍເງິນລ້ຽງລູກຈາກສະມຽນຂອງສານສູງສຸດ ແລະ ກໍ່ຕັ້ງສຳນວນເອກສານຂຶ້ນ
- ບາງເທື່ອ, DCS ບໍ່ສາມາດຊອກຫາພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງເພື່ອຈະສົ່ງເອກສານທາງກົດໝາຍຍື່ນໃສ່ມື, ຕິດແທດໃສ່ເງິນເດືອນຫລື ຊັບສິນອື່ນໆ
- ບາງເທື່ອ, ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງຮ້ອງຂໍເອົາການຟັງເຣື່ອງເພື່ອຈະຄັດຄ້ານການຈ່າຍເງິນລ້ຽງລູກ ຫລື ໜີ້ໃນຜ່ານມາ
- ຖ້າຫາກວ່າພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງກຳລັງໄດ້ຮັບເງິນຊ່ວຍເຫລືອສາທາຣະນະຢູ່ ຫລື ວ່າງງານ, DCS ອາດຈະບໍ່ສາມາດທີ່ຈະເກັບເອົາເງິນລ້ຽງລູກໄດ້
- ຖ້າຫາກວ່າພໍ່ແມ່ຜູ້ທີ່ມີຄວາມຄຸ້ມຄອງບໍ່ເອົາທີ່ຢູ່ປັດຈຸບັນໃຫ້, ການຈ່າຍເງິນອາດຈະຖືກຊັກຊ້າ

## ການບັງຄັບໃຊ້

ກົດໝາຍຂອງຣັດ ແລະ ຂອງຣັດຖະບານກາງເອົາໃຫ້ DCS ເຄື່ອງມືຫລາຍໆເພື່ອຈະເກັບເອົາເງິນລ້ຽງລູກ. ພວກເຮົາເອີ້ນວ່າ "ການບັງຄັບໃຊ້" ເມື່ອເວລາພວກເຮົາໃຊ້ເຄື່ອງມືເກັບເອົາ. ເຄື່ອງມື ບາງຢ່າງທີ່ພວກເຮົາໃຊ້ເພື່ອຈະເກັບເອົາເງິນລ້ຽງລູກລວມເອົາ:

- ການຕິດຄັດໃສ່ເງິນຄ່າແຮງງານ ແລະ ຣາຍໄດ້ອື່ນໆເຊັ່ນວ່າເງິນວ່າງງານ ແລະ ເງິນເບັ້ຽບຳນານ
- ການຍົກເລີກຊົ່ວຄາວໃນໃບຂັບຂີ່, ໃບຕຶກປາ, ໃບລ່າສັດ ແລະ ໃບອະນຸຍາດອື່ນໆ
- ການຍຶດເອົາມາແລະການຂາຍຣົດ,ເຮືອແລະຣົດຍົນອື່ນໆ
- ການຕິດຄັດໃສ່ການລົງທຶນ, ບັນຊີເຊັວວິງ ແລະ ເຊັກກິງ
- ການຕິດຄັດໃສ່ໃບພາສີຣາຍໄດ້ສົ່ງຄືນ IRS, ມູນມໍຣະດົກ, ແລະ ການ ຖືກຫວຍຣົດເຕີຣີ
- ການປະຕິເສດໃບໜັງສືເດີນທາງ

## ຣັດອື່ນ

ກົດຫມາຍຂອງຣັດ ແລະ ຣັດຖະບານກາງອະນຸຍາດໃຫ້ຣັດຕ່າງໆທີ່ຈະເຮັດວຽກຮ່ວມກັນເມື່ອເວລາພໍ່ແມ່ອາສັຍຢູ່ຕ່າງຣັດ. DCS ສາມາດຮ້ອງຂໍໃຫ້ຣັດອື່ນທີ່ຈະຊ່ວຍເຫລືອກໍ່ຕັ້ງ, ດັດແປງໃຫມ່ ແລະ ເກັບເອົາເງິນລ້ຽງລູກ ແລະ ຣັດອື່ນໆສາມາດຮ້ອງຂໍໃຫ້ DCS ທີ່ຈະຊ່ວຍເຂົາເຈົ້າໄດ້.

ຍ້ອນວ່າກົດຫມາຍຂອງຣັດທຸກໆຣັດບໍ່ຄືກັນ, ມັນອາດຈະຍາກທີ່ຈະເກັບເອົາການຈ່າຍເງິນເປັນປະຈຳເມື່ອເວລາມີສອງ ຫລື ຫລາຍຣັດເຮັດວຽກໃສ່ສຳນວນເອກສານເງິນລ້ຽງລູກອັນນຶ່ງ. ເມື່ອເວລາອັນນີ້ເກີດຂຶ້ນ, DCS ພະຍາຍາມທີ່ຈະຊອກຫາ ແລະ ຕິດຄັດໃສ່ເງິນຄ່າແຮງງານ. ບາງຣັດເກັບເອົາຄ່າທຳນຽມສຳລັບການບໍຣິການ, ແລະ ບາງຣັດເກັບເອົາດອກເບັ້ຽໃສ່ເງິນຍັງເຫລືອໃນຫນີ້ບໍ່ຈ່າຍຜ່ານມາ. ຣັດວໍຊິງຕັນເກັບເອົາຄ່າທຳນຽມ $25.00 ປະຈຳປີຖ້າຫາກວ່າທ່ານບໍ່ເຄີຍໄດ້ຮັບຈັກເທື່ອໃນເງິນຊ່ວຍເຫລືອຊົ່ວຄາວສຳລັບຄອບຄົວຂັດສົນ (TANF), ເງິນ Tribal TANF, ຫລື ການຊ່ວຍເຫລືອຄອບຄົວທີ່ມີເດັກນ້ອຍຫວັງເພິ່ງ (AFDC) ສຳລັບເດັກນ້ອຍຢູ່ໃນຄອບຄົວ. ຣັດວໍຊິງຕັນເກັບເອົາດອກເບັ້ຽສຳລັບຣັດອື່ນ.

## ສຳນວນເອກສານຂອງຊົນເຜົ່າ

ຊົນເຜົ່າອະເມຣິກັນດັ້ງເດີມບາງຊົນເຜົ່າມີໂຄງການເງິນລ້ຽງລູກຂອງເຂົາເຈົ້າເອງ. ຊົນເຜົ່າອື່ນໆອາດຈະມີກົດຫມາຍເງິນລ້ຽງລູກຂອງເຂົາເຈົ້າເອງ ແລະ ວິທີການດຳເນີນການສຳລັບກໍ່ຕັ້ງ ແລະ ບັງຄັບໃຊ້ເງິນລ້ຽງລູກເມື່ອເວລາພໍ່ແມ່ເປັນສະມາຊິກຂອງຊົນເຜົ່າ, ອາສັຍຢູ່ໃນເຂດແດນສະງວນ, ຫລື ເຮັດວຽກໃຫ້ຊົນເຜົ່າ. DCS ເຮັດວຽກນຳຊົນເຜົ່າເພື່ອຈະກໍ່ຕັ້ງ ແລະ ບັງຄັບໃຊ້ສຳນວນເອກສານເງິນລ້ຽງລູກ.

ໂທຫາ DCS ເພື່ອຣາຍຣະອຽດກ່ຽວກັບເງິນລ້ຽງລູກຂອງຊົນເຜົ່າ ຫລື ໄປຫາແວບໄຊທ໌ຂອງພວກເຮົາໄດ້ທີ່ www.childsupportonline.wa.gov
(*ບີບໃສ່* Tribal Relations).

## ພໍ່ແມ່ທັງສອງຄົນຄວນຈະບອກ **DCS** ເມື່ອເວລາ:

- ເດັກນ້ອຍຍ້າຍເຂົ້າມາ ຫລື ອອກໄປຈາກຄອບຄົວ
- ທ່ານຍ້າຍເຮືອນ ແລະ ມີທີ່ຢູ່ໃຫມ່
- ທ່ານປ່ຽນຊື່ຂອງທ່ານ
- ມີໃບຄຳສັ່ງຈາກສານໃບໃຫມ່
- ທ່ານ ຫລື ລູກໄດ້ຮັບເງິນຊ່ວຍເຫລືອສາທາຣະນະ, ເງິນເສັຽອົງຄະ Social Security Disability (SSD), ຫລື ເງິນ Supplemental Security Income (SSI)

DCS ຕິດຕໍ່ຫາພໍ່ແມ່ ແລະ ຜູ້ເບິ່ງແຍງດູແລ ເພື່ອຈະສອບຖາມເບິ່ງວ່າ ເຂົາເຈົ້າມີຣາຍຣະອຽດ ຫລື ບໍ່ ເພື່ອຈະຊ່ວຍເກັບເອົາເງິນລ້ຽງລູກ. ບອກພວກເຮົາຖ້າຫາກວ່າພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ:

- ປ່ຽນວຽກງານ, ກາຍເປັນວ່າງງານ ຫລື ບາດເຈັບ
- ໃຊ້ຊື່ອື່ນ ແລະ ເລກຄວາມປອດພັຍຂອງສັງຄົມເລກອື່ນ
- ເປັນເຈົ້າຂອງຣົດ, ເຮືອນ, ຫລື ການລົງທຶນ ຫລື ບັນຊີທະນາຄານ
- ມີຄອບຄົວ ຫລື ຫມູ່ເພື່ອນຜູ້ທີ່ອາດຈະຮູ້ຈັກຣາຍຣະອຽດ
- ຢູ່ໃນຄຸກ, ຕະລາງ ຫລື ຖືກປ່ອຍຕົວອອກມາເຮັດວຽກ

## ຄວາມຮຸນແຮງໃນຄອບຄົວ

ທ່ານສາມາດໄດ້ຮັບຄວາມຊ່ວຍເຫລືອຖ້າຫາກວ່າທ່ານ ຫລື ລູກຂອງທ່ານຕົກຢູ່ໃນອັນຕະລາຍ. ການຂົ່ມເຫັງທາງຮ່າງກາຍແມ່ນອາດສະຍາກັມ.

- ໂທຫາຕຳຣວດ
- ໂທຫາສາຍດ່ວນ Domestic Violence Hotline ໄດ້ທີ່ເລກ 800-562-6025
- ໂທຫາພະແນກ Child Protective Services (CPS) 800-562-5624 ຫລື 866-ENDHARM
- ໂທຫາໂຄງການ Address Confidentiality Program (ACP) ໄດ້ທີ່ເລກ 800-822-1065
- ບອກພະນັກງານເກັບເງິນລ້ຽງລູກຂອງທ່ານ ຫລື ພະນັກງານຊ່ວຍເຫລືອສາທາຣະນະຂອງທ່ານ. ກົດຫມາຍຂອງຣັດບັ່ງໃຫ້ພວກເຮົາທີ່ຈະລາຍງານຖ້າຫາກວ່າພວກເຮົາເຊື່ອວ່າເດັກນ້ອຍເປັນຜູ້ເຄາະຮ້າຍຂອງການກົດຂີ່ຂົ່ມເຫັງ ຫລື ການປ່ອຍປະລະເລີຍ.

## ບຸກຄົນຜູ້ທີ່ມີຄວາມເສັຽອົງຄະ

DCS ໃຫ້ຄວາມຊ່ວຍເຫລືອສຳລັບຜູ້ບໍ່ສົມບູນດ້ານການຟັງສຽງ.

- ໂທຫາສາຍ TDD ຂອງພວກເຮົາໄດ້ທີ່ເລກ 360-664-5011

ພວກເຮົາຍັງສາມາດຈັດຫານາຍພາສາໃບ້ ແລະ ນາຍແປພາສາໃຫ້ໄດ້ອີກຄືກັນ.

- ໂທຫາພວກເຮົາໄດ້ທີ່ເລກ 800-820-2363



พວກເຮົາຮູ້ຈັກວ່າທ່ານຕ້ອງການເບິ່ງແຍງດູແລລູກຂອງທ່ານ.
*ໃຫ້ພວກເຮົາຊ່ວຍເຫລືອທ່ານ.*

| ເມືອງ | ເລກໂທຣະສັບ | ອີແມລ໌ |
|---|---|---|
| **Everett:** | 800-729-7580<br>425-438-4800 | everett-dcs@dshs.wa.gov |
| **Kennewick:** | 800-345-9981<br>509-374-2000 | ken-imail@dshs.wa.gov |
| **Olympia:** | 800-345-9964<br>360-664-6900 | oly-imail@dshs.wa.gov |
| **Seattle:** | 800-526-8658<br>206-341-7000 | seattle-dcs@dshs.wa.gov |
| **Spokane:** | 800-345-9982<br>509-363-5000 | spomail@dshs.wa.gov |
| **Tacoma:** | 800-345-9976<br>253-597-3700 | tacoma-dcs@dshs.wa.gov |
| **Vancouver:** | 800-345-9984<br>360-696-6100 | vancouver-dcs@dshs.wa.gov |
| **Wenatchee:** | 800-535-1113<br>509-886-6800 | wenatchee-dcs@dshs.wa.gov |
| **Yakima:** | 800-441-0859<br>509-249-6000 | yak-imail@dshs.wa.gov |
| ສູນກາງໃຫຍ່ | 800-457-6202<br>360-664-5000 | dcs-cru@dshs.wa.gov |

Washington State
Department of Social
& Health Services

*Transforming lives*

DSHS 22-583 LA (Rev. 12/15) Laotian